ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 090 /ບທວລ

ນະຄອນຫຼວງວຽງຈັນ, ວັນທີ 23 APR 2025

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,

ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ກຸ່ມທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ເລື່ອງ: ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈຳໄຕມາດ 1 ປີ 2025.

- ຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊິມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປທ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດລາຍງານມາຍັງ ທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງ ບໍລິສັດ ນັບແຕ່ບໍລິສັດໄດ້ ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

1. ສຳລັບວຽກງານການຊື້ຮຸ້ນຂອງບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ຍັງບໍ່ທັນສຳເລັດເນື່ອງຈາກວ່າເງິນທຶນຍັງບໍ່ທັນມີຄາດວ່າຈະສຳເລັດພາຍໃນທ້າຍ 2025.
2. ສຳລັບໂຄງການກໍ່ສ້າງຕຶກສຳນັກງານ ບໍລິສັດ ໄດ້ສຳເລັດໂຄງສ້າງຮອດ 15 ຊັ້ນແລ້ວ ແລະຈະໄດ້ດຳເນີນການກໍ່ສ້າງຈົນກວ່າຈະສຳເລັດຕາມຄາດໝາຍ.
3. ການຈ່າຍເງິນອຸດໜູນ ອອກການໃຫ້ອາດີດພະນັກງານ ຂອງບໍລິສັດ ທີ່ຍັງເຫຼືອອີກຈຳນວນ 35% (4.353.909.464 ກີບ) ບໍລິສັດຄາດວ່າຈະຈ່າຍໃຫ້ສຳເລັດພາຍໃນເດືອນ 06/2025 ນີ້.
4. ບົດປະເມີນສິ່ງແວດລ້ອມຢູ່ໃນໄລຍະການແລ່ນເອກະສານຄາດວ່າຈະສຳເລັດພາຍໃນເດືອນ 7/2025
5. ທາງບໍລິສັດໄດ້ກຳລັງສຳຫຼວດກໍ່ສ້າງພະພຸດທະຮູບພູຜາບົວວັງວຽງ ເພື່ອເຮັດໃຫ້ປາຖະໜາການ ກໍ່ສ້າງພະພຸດທະຮູບສີອະລີ, ສົ່ງເສີມວັດທະນະທຳພຸດທະສາສະໜາ ແລະ ຊຸກຍູ້ເສດຖະກິດ-ສັງຄົມມີການພັດທະນາຢ່າງ ຮອບດ້ານປະກົດຜົນເປັນຈິງ.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່ ບໍລິສັດ

ໝັ້ຍເຫຼ່ຍ

ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
Phonphanao Village, Saysettha District, Vientiane Capital, Lao PDR
Tel: (856-21) 451116, 451222, Facebook: Lao Culture Tourism Public Group Company